ສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ກະຊວງກະສິກຳ ແລະ ປ່າໄມ້ 0100

ກົມປູກຝັງ ເລກທີ ................../ກປຝ

ນະຄອນຫຼວງວຽງຈັນ, ວັນທີ 13 JAN 2012

# ແຈ້ງການ

**ຮຽນ:** ທ່ານ ຫົວໜ້າຂະແໜງປູກຝັງ ນະຄອນຫຼວງ ແລະ ບັນດາແຂວງ ໃນຂອບເຂດທົ່ວປະເທດ

**ເລື່ອງ:** ເອົາໃຈໃສ່ສະກັດກັ້ນໃບຢັ້ງຢືນສຸຂານາໄມພືດທີ່ບໍ່ຖືກຕ້ອງຕາມຫຼັກການປ້ອງກັນພືດສາກົນຈາກປະເທດກຳປູເຈຍ.

- ອີງຕາມກົດໝາຍວ່າດ້ວຍ ການປ້ອງກັນພືດ, ສະບັບເລກທີ 06/ສພຊ, ລົງວັນທີ 9 ທັນວາ 2008.
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ວ່າການກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍການ ຈັດຕັ້ງ ແລະ ເຄື່ອນໄຫວ ຂອງຈຸດສອບຖາມ SPS ສະບັບເລກທີ 1502/ກປ ລົງວັນທີ 23/6/2011.
- ອີງຕາມການສະເໜີຈາກພະແນກກັກກັນພືດ ຄັ້ງວັນທີ 8/1/2012.

ກົມປູກຝັງຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ ໃນຊຸມປີທີ່ຜ່ານມາການຕິດຕາມການແຈ້ງ ເອກະສານຂາເຂົ້າຜ່ານດ່ານປ້ອງກັນພືດໄດ້ກວດພົບໃບຢັ້ງຢືນສຸຂານາໄມພືດຈາກປະເທດກຳປູເຈຍອອກໃຫ້ແກ່ແນວພັນອ້ອຍທີ່ນຳເຂົ້າມາໃນ ສປປ. ລາວ, ເຫັນວ່າບໍ່ຖືກຕ້ອງ ແລະ ສອດຄ່ອງຕາມສົນທິສັນຍາປ້ອງກັນພືດສາກົນ (IPPC-International Plant Protection Convention) ໂດຍສະເພາະມາດຕະຖານສາກົນດ້ານ ມາດຕະການສຸຂານາໄມ ພືດ ເລກທີ 7 (ISPM No 7 ) ແລະ 12 (ISPM No 12) ຕາມລຳດັບ ວ່າດ້ວຍການຢັ້ງຢືນສຸຂານາໄມພືດຊຶ່ງສະແດງອອກຄື:

- ແບບຮ່າງໃບຢັ້ງຢືນສຸຂານາໄມພືດບໍ່ຖືກຕ້ອງຕາມທີ່ອົງການປ້ອງກັນພືດແຫ່ງຊາດ ກຳປູເຈຍ ກຳນົດອອກ.
- ຜູ້ທີ່ລົງລາຍເຊັນໃສ່ໃບຢັ້ງຢືນສຸຂານາໄມພືດ ແມ່ນບໍ່ໄດ້ຖືກແຕ່ງຕັ້ງ ຫຼື ມອບສິດຈາກອົງການປ້ອງກັນພືດແຫ່ງຊາດຂອງປະເທດກຳປູເຈຍ.
- ເນື້ອໃນການຢັ້ງຢືນບໍ່ສອດຄ່ອງຕາມ ສົນທິສັນຍາປ້ອງກັນພືດສາກົນ.

ສະນັ້ນ,ຖ້າຫາກວ່າດ່ານປ້ອງກັນພືດໃດກວດພົບໃບຢັ້ງຢືນສຸຂານາໄມພືດທີ່ກ່າວມາຂ້າງເທິງນັ້ນຕ້ອງນຳໃຊ້ ມາດຕະການປະຕິບັດຄືກັນກັບສັດຕູພືດຕິດແປດຕາມ ມາດຕາ 17 ຂອງກົດໝາຍວ່າດ້ວຍການ ປ້ອງກັນ

ພືດພ້ອມທັງເຮັດບົດບັນທຶກກ່າວເຕືອນຜູ້ນໍາເຂົ້າ ແລະ ລາຍງານໃຫ້ກົມປູກຝັງຊາບ, ແຕ່ຖ້າມີການສືບຕໍ່ແຈ້ງໃບຢັ້ງຢືນດັ່ງກ່າວ ແມ່ນໃຫ້ປະຕິບັດມາດຕະການຕໍ່ຜູ້ກະທໍາຜິດຕາມລະບຽບກົດໝາຍ.

ໝາຍເຫດ: ເອກະສານຊ້ອນທ້າຍ 1: ໃບຢັ້ງຢືນສຸຂານາໄມພືດທີ່ນໍາໃຊ້ບໍ່ໄດ້

ເອກະສານຊ້ອນທ້າຍ 2: ໃບຢັ້ງຢືນສຸຂານາໄມພືດທີ່ນໍາໃຊ້ໄດ້

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ຫົວໜ້າກົມປູກຝັງ

ກະຊວງກະສິກຳ ແລະ ປ່າໄມ້ ກົມປູກຝັງ

ດຣ. ມົນທາທິບ ຈັນເພັງໄຊ

ບ່ອນສົ່ງ:

- ພະແນກກະສິກໍາ ແລະ ປ່າໄມ້ , ບ່ອນລະ 1 ສະບັບ (ເພື່ອຊາບ ແລະ ໃຊ້ຕາງລາຍງານ)
- ກົມກວດກາ ກະຊວງ ກປ. 1 ສະບັບ (ເພື່ອຊາບ ແລະ ໃຊ້ຕາງລາຍງານ)
- ກົມແຜນການ(ຈຸດສອບຖາມSPS), ກະຊວງກປ. 1 ສະບັບ (ເພື່ອຊາບ)
- ດ່ານປ້ອງກັນພືດ 1 ສະບັບ (ເພື່ອຈັດຕັ້ງປະຕິບັດ)
- ເກັບມ້ຽນ 1 ສະບັບ

ເອກະສານຊ້ອນທ້າຍ1: ໃບຢັ້ງຢືນສຸຂານາໄມພືດທີ່ນຳໃຊ້ບໍ່ໄດ້ (ບໍ່ຖືກຕ້ອງ)

ព្រះរាជាណាចក្រកម្ពុជា

KINGDOM OF CAMBBODIA

ជាតិ សាសនា ព្រះមហាក្សត្រ

NATIONAL RELIGION KING

ការិយាល័យកសិកម្មរុក្ខាប្រមាញ់និងនេសាទ ស្រុកអន្លង់វែង ខេត្តឧត្តរមានជ័យ

OFFICE OF AGRICULTURE FORESTRY AND FISHERIES
ANLONG VENG DISTRIC, ORDORMEANCHEY PROVINCE

វិញ្ញាបនបត្រ ភូតគាមអនាម័យ

## PHYTOSANITATION CERTIFICATE

| | | |
|---|---|---|
| ឈ្មោះនិងអាស័យដ្ឋានអ្នកលក់ | : | ក្រុមហ៊ុនអង្គរស៊ូហ្គ័រ |
| Name and Address of Consignor | : | Angkor Sugar Company Limited<br>OrchunChen village,Anlong Veng district,<br>Ordor Meanchey Province. |
| ឈ្មោះនិងអាស័យដ្ឋានអ្នកទិញ | : | មិត្រឡាវស៊ូហ្គ័រ |
| Name and Address of Consignee | : | Mitr Lao Sugar Company Limited<br>111 Unit 10 Kenghet village,<br>Xayouly Distric,Sovannakhet Province,<br>Lao PDR. |
| មុខទំនិញនិងចំនួន | : | ពូជអំពៅ ២០០០ តោន - |
| Name of product and Quantity | : | Can tree 2000 Tons |
| សញ្ញាសំគាល់ | : | គ្មានសញ្ញាសំគាល់ |
| Distinguish Marks | : | No Marks |
| ប្រភពទំនិញ | : | ខេត្តឧត្តរមានជ័យ ប្រទេសកម្ពុជា |
| Place of Origins | : | Ordormeanchey Province, CAMBODIA |
| ការដឹកជញ្ជូន | : | រថយន្ត |
| Means of Conveyance | : | Trucks |
| ច្រកនាំចូល | : | ច្រកជាំអន្លង់វែង-ឆងសាង៉ាំភូស៊ីង |
| Declared Port of Entry | : | Chaom Anlong Veng- Changsangamphusing<br>Border pass |

សូមបញ្ជាក់ថាបានចុះត្រួតពិនិត្យខ្សែសង្វាក់កសិកម្មថ្ងៃទី០៤...ខែ០៥...ឆ្នាំ២០១០ពុំឃើញមេរោគភគស្បាតនៅក្នុងបាវវេចខ្ចប់និងធ្វើការពិសោធន៍ពុំឃើញមានការខូចខាតធំដុំក្នុងបាវឡើយ ។ពិនិត្យឃើញថាក្រុមហ៊ុនបានបំពេញតាមបទដ្ឋានភូតគ្រាមអនាម័យនាំចេញ ។

This is to certify that plant or parallel product above has been an inspected on date.04.../05.../2010...and found no ravages of the sacks covering and no serious destroy in the sack and has seen that the company had completed the standard hygiene of importing products.

ថ្ងៃ ទី ខែ ឆ្នាំ/Date of License..06/05/2010..........................

ប្រធានការិយាល័យ កសិកម្ម/Name of Agriculture officer.....................

ហត្ថលេខា/signature..............................

បានឃើញនិងឯកភាព ។

អន្លង់វែងថ្ងៃទី..០៦..ខែ..០៥..ឆ្នាំ..២០១០..

អភិបាលស្រុក

យឹម_ផាន់ណា

ກະສານຊ້ອນທ້າຍ 2 : ໃບຢັ້ງຢືນສຸຂານາໄມພືດທີ່ນຳໃຊ້ໄດ້ (ຖືກຕ້ອງ)

# ANNEX 1

SPECIMEN
PHYTOSANITARY CERTIFICATE

KINGDOM OF CAMBODIA
Nation Religion King
GENERAL DIRECTORATE OF AGRICULTURE
PLANT PROTECTION, SANITARY AND PHYTOSANITARY DEPARTMENT

## PHYTOSANITARY CERTIFICATE

No. **1610/11**

| | |
|---|---|
| From : Plant Protection Organization of KINGDOM OF CAMBODIA | To : Plant Protection Organization(s) of RUSSIA |

### I. DESCRIPTION OF CONSIGNMENT

| Name and address of exporter | Declared name and address of consignee |
|---|---|
| (Hiden for Commercial Property Right Reason) | (Hiden for Commercial Property Right Reason) |
| Number and description of packages | Distinguishing marks |
| LOADED IN 13 CONTAINERS AS APPEARED IN ATTACHMENT. CN CODE 1006 30 98 | AS PER BUYER' S MARKING |

| Place of Origin | Declared means of conveyance | Declared point of entry |
|---|---|---|
| KINGDOM OF CAMBODIA | SEA | ST.PETERSBURG, RUSSIA VIA SINGAPORE |

| Name of produce and quantity declared | Botanical name of plants |
|---|---|
| CAMBODIAN LONG GRAIN WHITE RICE, MAX 10% BROKENS, MOISTURE MAX 14%<br>GROSS WEIGHT:312,748.80 KG(S)<br>NET WEIGHT:312,000.00 KG(S) | *Oryza sativa* |

This is to certify that the plant and plant products or other regulated articles described herein have been inspected and /or tested according to appropriate official procedures and are considered to be free from the quarantine pests specified by the importing contracting party and to conform with the current phytosanitary requirements of the importing contracting party, including those for regulated non-quarantine pests.

### II. ADDITIONAL DECLARATION

NIL

### III. DISINFESTATION AND / OR DISINFECTION TREATMENT

| | |
|---|---|
| Treatment Date: 21-DEC-2011 | Treatment : FUMIGATION |
| Chemical (Active ingredients): ALUMINIUM PHOSPHIDE | Duration & Temperature: 120HOURS/30 °C |
| Concentration: 3.8GRAMS OF PHOSPHINE PER CU.M | Additional Information: TREATED BY CAM.PCS |

Date Inspected 21-DEC-2011 Place of Issue PHNOM PENH Date Issued 27-DEC-2011

| | |
|---|---|
| HEAN VANHAN, PhD, Deputy Director General<br>GENERAL DIRECTORATE OF AGRICULTURE | PREAP VISARTO, PHD<br>ACTING DIRECTOR OF PLANT PROTECTION, SPS DEPARTMENT |

PLANT PROTECTION SANITARY AND PHYTOSANITARY DEPARTMENT, No.54B, Str 656, Sangkat Toeuk Laak 3, Khan Tuol Kok, P-Penh, Cambodia.
Tel: (855)23 885 482, FAX:(023) 883 267, EMAIL : ppspsdcam@online.com.kh